# ຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດໂຄງການ ໄຟຟ້ານ້ຳຕົກ ນ້ຳເທີນ 2

## ບົດລາຍງານ ຄວາມຄືບໜ້າໄລຍະສັ້ນ

ກຸມພາ 28, 2008

**ອັກສອນຫຍໍ້ ແລະ ຄໍາສັບຫຍໍ້**

| | | |
|---|---|---|
| ADB | Asian Development Bank | ທະນາຄານພັດທະນາອາຊີ |
| CA | Concession Agreement | ສັນຍາສໍາປະທານ |
| COD | Commercial Operations Date | ມື້ເລີ່ມຕົ້ນດໍາເນີນການຜະລິດ ທາງທຸລະກິດ |
| DSRP | Dam Safety Review Panel | ຄະນະກໍາມະການທົບທວນຄວາມປອດໄພຂອງເຂື່ອນ |
| GOL | Government of Lao PDR | ລັດຖະບານແຫ່ງ ສປປ ລາວ |
| IAG | International Advisory Group | ທີມງານທີ່ປຶກສາສາກົນ |
| IFIs | International Financial Institutions | ສະຖາບັນການເງິນສາກົນ |
| IMA | Independent Monitoring Agency | ອົງການຕິດຕາມກວດກາເອກະລາດ |
| IPR | Interim Progress Report | ບົດລາຍງານຄວາມຄືບໜ້າໄລຍະສັ້ນ |
| LSMS | Living Standard Measurement Survey | ການສໍາຫລວດ ການວັດແທກ ມາດຖານການເປັນຢູ່ |
| MAF | Ministry of Agriculture and Forestry | ກະຊວງກະສິກໍາ ແລະ ປ່າໄມ້ |
| MOL | Minimum Operating Level | ລະດັບຕ່ໍາສຸດສໍາລັບການດໍາເນີນງານ |
| NT2 | Nam Theun 2 Hydroelectric Project | ໂຄງການໄຟຟ້ານ້ໍາຕົກນ້ໍາເທີນ 2 |
| NTSEP | Nam Theun 2 Social and Environment Project | ໂຄງການສັງຄົມ ແລະ ສິ່ງແວດລ້ອມຂອງນ້ໍາເທີນ 2 |
| NTPC | Nam Theun 2 Power Company Limited | ບໍລິສັດໄຟຟ້ານ້ໍາເທີນ 2 ຈໍາກັດ |
| POE | Environmental and Social Panel of Experts | ທີມງານຜູ້ຊ່ຽວຊານດ້ານສິ່ງແວດລ້ອມ ແລະ ສັງຄົມ |
| UXO | Unexploded Ordnance | ລະເບີດບໍ່ທັນແຕກ |
| VFA | Village Forestry Association | ສະມາຄົມປ່າໄມ້ຊາວບ້ານ |
| WB | World Bank | ທະນາຄານໂລກ |
| WMPA | Watershed Management and Protection Authority | ອົງປົກປັກຮັກສາ ແລະ ຄຸ້ມຄອງອ່າງໂຕ່ງ |

# ຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດໂຄງການ ໄຟຟ້ານ້ຳຕົກ ນ້ຳເທີນ 2: ບົດລາຍງານ ຄວາມຄືບໜ້າໄລຍະສັ້ນ

**ພາກສະເໜີ**

1. *ບົດລາຍງານນີ້ ແມ່ນບົດລາຍງານ ຄືບໜ້າໃນໄລຍະສັ້ນ ທີ່ເນັ້ນໜັກ ກ່ຽວກັບ ມາດຕະການວ່າດ້ວຍຄວາມປອດໄພ ທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ເພື່ອແກ້ໄຂບັນຫາທີ່ຈະເກີດຂຶ້ນ ຈາກການປະຕິບັດໂຄງການ ຕໍ່ປະຊາຊົນ ທີ່ອາໄສຢູ່ເຂດພູພຽງນາກາຍ ແລະ ເຂດກ້ອງເຂື່ອນ ຊຶ່ງຈະໄດ້ຮັບຜົນກະທົບໂດຍກົງຈາກໂຄງການ.* ບົດລາຍງານດັ່ງກ່າວນີ້ ເປັນບົດລາຍງານເພີ້ມເຕີມ ໃຫ້ແກ່ ບົດລາຍງານຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດໂຄງການ ໄຟຟ້ານ້ຳຕົກນ້ຳເທີນ 2 ທີ່ໄດ້ເຜີຍແຜ່ໃຫ້ແກ່ ສະພາບໍລິຫານ ຂອງທະນາຄານໂລກ ໃນວັນທີ 4 ທັນວາ 2007 ແລະ ໄດ້ຜ່ານສະພາບໍລິຫານ ຂອງ ທະນາຄານພັດທະນາອາຊີ, ພ້ອມກັນນັ້ນ ກໍໄດ້ ມີການເຜີຍແຜ່ໃນເຊີງວິຊາການ ໂດຍຫຍໍ້ໃຫ້ແກ່ ສະພາບໍລິຫານ ຂອງທະນາຄານໂລກ ໃນວັນທີ 5 ມັງກອນ 2008. ການປະຕິບັດມາດຕະການ ວ່າດ້ວຍຄວາມປອດໄພ ແມ່ນກ່ຽວພັນກັບ ຄວາມໄວໃນການຍົກຍ້າຍຈັດສັນ ປະຊາຊົນ ອາໃສຢູ່ໃນເຂດ ທີ່ຈະກາຍເປັນອ່າງໂຕ່ງ ໃນເຂດພູພຽງນາກາຍ ທີ່ຈະຕ້ອງໄດ້ເຮັດໃຫ້ສຳເລັດ ກ່ອນຈະມີການກັກນ້ຳ ເຂົ້າໃນອ່າງ. ບ້ານຫຼັງໃໝ່, ຖະໜົນຫົນທາງ, ສູນສຸຂະພາບ, ໂຮງຮຽນ, ນ້ຳສ້າງ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ທີ່ຈຳເປັນ ຈະຕ້ອງສ້າງໃຫ້ສຳເລັດ ກອ່ນການກັກນ້ຳເຂົ້າອ່າງ. ພ້ອມດຽວກັນນັ້ນ ກໍກຳລັງໃຊ້ວິທີການຕ່າງໆ ທີ່ຈຳເປັນ ໃນການເສີມສ້າງຄວາມເຂັ້ມແຂງ ໃຫ້ແກ່ວຽກງານ ປັບປຸງຊີວິດການເປັນຢູ່ ໃຫ້ແກ່ປະຊາຊົນ ທີ່ຖືກຍົກຍ້າຍ ເພື່ອຮັບປະກັບວ່າລາຍຮັບຂອງເຂົາ ຈະເພີ້ມຂຶ້ນ ໃຫ້ໄດ້ຕາມໄລຍະເວລາທີ່ໄດ້ກຳນົດໄວ້ ໃນສັນຍາສຳປະທານ; ຊົດເຊີຍທີ່ດິນໂຄງການ ໃຫ້ແກ່ປະຊາຊົນທີ່ສູນເສຍທີ່ດິນ; ໃຫ້ການຊ່ວຍເຫຼືອແກ່ ປະຊາຊົນທີ່ອາໃສຢູ່ເຂດກ້ອງເຂື່ອນ ເພື່ອຮັບມືກັບ ການປ່ຽນແປງໃນລະດັບນ້ຳ ແລະ ຄຸນນະພາບຂອງນ້ຳ; ເພີ່ມທະວີການກະກຽມເພື່ອຊວ່ຍເຫຼືອ ແລະ ຕິດຕາມ ຄວາມຄືບໜ້າຂອງມາດຕະການທີ່ໄດ້ກ່າວມາຂ້າງເທິງນີ້. ຖ້າຫາກຈຳເປັນຈະຕອ້ງ ໄດ້ລາຍງານ ຄວາມຄືບໜ້າເພີ່ມເຕີມ ບົດລາຍງານໄລຍະສັ້ນກໍຈະໄດ້ຈັດຕຽມຂຶ້ນອີກເທື່ອໜຶ່ງ. ຖ້າບໍ່ດັ່ງນັ້ນ ບົດລາຍງານ ປະຈຳປີ ກໍຈະໄດ້ຂຽນຂຶ້ນ ໃນເດືອນ ມິຖຸນາ/ກໍລະກົດ 2008 ຊຶ່ງຈະໄດ້ລາຍງານໂດຍລະອຽດກ່ຽວກັບທຸກໆ ບັນຫາທີ່ກ່ຽວຂ້ອງກັບໂຄງການ.

2. *ໂຄງການນ້ຳເທີນ2 ກຳລັງກ່າວເຂົ້າສູ່ ຂີດໝາຍອັນສຳຄັນ ກ່ອນຈະມີການກັກນ້ຳເຂົ້າໃນອ່າງ.* ມັນຈະມີການພົວພັນເຖິງ ການປະຕິບັດການ ສອງຢ່າງຄື: (1) ປະຕູປິດທໍ່ອ່ວຍແລວນ້ຳແມ່ນຈະຖືກສ້າງຂຶ້ນໃນ ວັນທີ 10 ເມສາ 2008; (2) ປະຕູປິດນ້ຳຢູ່ເຂື່ອນນາກາຍ ຈະຖືກສ້າງຂຶ້ນໃນກາງເດືອນມິຖຸນາ 2008. ບົດລາຍ

ງານໄລຍະສັ້ນນີ້ ໄດ້ເວົ້າໂດຍລະອຽດ ກ່ຽວກັບມາດຖານ ກ່ອນຈະມີການກັກນໍ້າເຂົ້າໃນອ່າງ ແລະ ຍັງປະເມີນສະພາບການຈັດຕັ້ງປະຕິບັດການ ທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ຢູ່ເຂດພູພຽງນາກາຍ, ເຂດທີ່ດິນໂຄງການ ແລະ ເຂດພື້ນທີ່ນໍ້າແຫ້ງ ທີ່ຈະຕ້ອງເຮັດໃຫ້ສໍາເລັດ ໃນແຕ່ລະໄລຍະ ຂອງການຈັດຕັ້ງປະຕິບັດໂຄງການ ກ່ອນມື້ເລີ້ມຕົ້ນດໍາເນີນການຜະລິດ ທາງທຸລະກິດ.

3. *ຄາດໝາຍທີ່ຈະແຈ້ງ ທັງ 3 ຢ່າງ ຈະຕ້ອງເຮັດໃຫ້ສໍາເລັດ ກ່ອນຈະມີການກັກນໍ້າເຂົ້າໃນອ່າງ.* ໃນນັ້ນມີ: (i) ການຍົກຍ້າຍຈັດສັນ ຄອບຄົວທັງໝົດ ໃນເຂດພູພຽງນາກາຍ ທີ່ຖືກຜົນກະທົບ ໃຫ້ສໍາເລັດ ໄປພ້ອມໆກັບພື້ນຖານໂຄງລ່າງ ແລະ ການສະໜອງການບໍລິການຕ່າງໆ ທີ່ຈໍາເປັນ; (ii) ແຜນງານການຫາປາໃນອ່າງເກັບນໍ້າ ແລະ ແຜນງານສໍາຮອງຕ່າງໆ ທີ່ກ່ຽວຂ້ອງ ຈະຕ້ອງສ້າງໃຫ້ສໍາເລັດ; (iii) ແຜນງານ ເພື່ອແກ້ໄຂເຫດສຸກເສີນຈະຕ້ອງໄດ້ຖືກຮັບຮອງ ໂດຍຜ່ານການປຶກສາຫາລື ກັບຄະນະກໍາມະການ ທົບທວນຄວາມປອດໄພຂອງເຂື່ອນ (DSRP) ແລະ ສົ່ງແຜນງານດັ່ງກ່າວ ໃຫ້ຄະນະກໍາມະການ ທົບທວນຄວາມປອດໄພຂອງເຂື່ອນ, ທີມງານຜູ້ຊ່ຽວຊານດ້ານສິ່ງແວດລ້ອມ ແລະ ສັງຄົມ (POE) ແລະ ສະຖາບັນການເງິນສາກົນ (IFIs). ນອກເໜືອຈາກ 3 ຄາດໝາຍຂ້າງເທິງນີ້ແລ້ວ ໂຄງການຍັງຕ້ອງໄດ້ປະຕິບັດຕາມມາດຕະການ ສາມຢ່າງເພື່ອປະເມີນການຈັດຕັ້ງປະຕິບັດຂອງໂຄງການ. ໃນນັ້ນມີ (i) ແຜນງານກວມລວມ ກ່ຽວກັບມາດຕະການ ໃນການຫຼຸດຜ່ອນ ຜົນກະທົບ, ການຊົດເຊີຍ ແລະ ຂະບວນການຍົກຍ້າຍຈັດສັນ ເພື່ອແກ້ໄຂຜົນກະທົບ ທີ່ຈະເກີດຂຶ້ນ ໃນເຂດກ້ອງເຂື່ອນຈະຕ້ອງໄດ້ສ້າງຂຶ້ນ; (ii) ການຄັດເລືອກການອະນາໄມຈຸລະມູນສານ ໃນເຂດ ອ່າງເກັບນໍ້າທີ່ຈະຖືກນໍ້າທວມໂດຍຖາວອນຕ້ອງເຮັດໃຫ້ສໍາເລັດ; (iii) ການຈັດຕັ້ງປະຕິບັດ ແຜນງານ ໃນການຕິດຕາມນໍ້າລວມເຖິງການກໍານົດພື້ນຖານ ຄຸນນະພາບຂອງນໍ້າ ຈະຕ້ອງໄດ້ມີການເລີ່ມຕົ້ນດໍາເນີນງານ.

4. ***ນອກຈາກ 3 ຄາດໝາຍ ແລະ 3 ມາດຕະການ ນີ້ແລ້ວ, ຄວາມຄືບໜ້າຫຼາຍຢ່າງ ຈໍາເປັນຕ້ອງໄດ້ເກີດຂຶ້ນໃນຂອບເຂດຂອງວຽກງານຕ່າງໆທີ່ສໍາຄັນ ໃນດ້ານສິ່ງແວດລ້ອມ ແລະ ສັງຄົມ ທີ່ກ່ຽວພັນກັບການປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ທີ່ຖືກຍົກຍ້າຍ, ແກ້ໄຂບັນຫາການຈ່າຍຄ່າຊົດເຊີຍໃນເຂດທີ່ດິນໂຄງການ ແລະ ການຄຸ້ມຄອງຜົນກະທົບໃນເຂດກ້ອງເຂື່ອນ.*** ແຜນດໍາເນີນງານ ຄວາມກຽມພ້ອມໃນການກັກນໍ້າເຂົ້າໃນອ່າງ ຂອງລັດຖະບານ ແລະ ບໍລິສັດໄຟຟ້ານໍ້າເທີນ 2 ທີ່ກໍາລັງມີການສັງລວມຢູ່ນີ້ ຈະສາມາດໃຫ້ຂໍ້ມູນລະອຽດ ກ່ຽວກັບວຽກງານດ້ານສັງຄົມທີ່ຍັງຄົງຄ້າງ ຊຶ່ງຈະຕ້ອງໄດ້ມີການຈັດຕັ້ງປະຕິບັດພ້ອມພຽງກັນກັບ ການກໍານົດຕົວຊີ້ວັດໃນການຕິດຕາມ ເພື່ອວັດແທກຄວາມຄືບໜ້າ ວຽກງານດັ່ງກ່າວ. ແຜນງານດັ່ງກ່າວສາມາດ ເຜີຍແຜ່ໃຫ້ຄົນທົ່ວໄປໄດ້. ຂໍ້ມູນດັ່ງລຸ່ມນີ້ ແມ່ນການສັງລວມເອົາສະພາບຂອງການຈັດຕັ້ງປະຕິບັດ ວິທີການປ້ອງກັນຄວາມປອດໄພ ດ້ານສິ່ງແວດລ້ອມ ແລະ ສັງຄົມ.

**ເຂດພູພຽງນາກາຍ**

5. *ປະຊາຊົນທີ່ຖືກຜົນກະທົບ ທັງໝົດ ໃນເຂດພູພຽງນາກາຍ ແມ່ນຈະໄດ້ຖືກຍົກຍ້າຍ, ແລະ ບ້ານໃໝ່ ແລະ ພື້ນຖານໂຄງລ່າງຕ່າງໆ ຈະສຳເລັດ ກ່ອນຈະມີການປິດປະຕູເຂື່ອນ ໃນເດືອນ ມິຖຸນາ 2008.* ໃນທ້າຍເດືອນກຸມພາ 2008 ການກໍ່ສ້າງບ້ານ ໄດ້ສຳເລັດແລ້ວ ໃນ 9 ບ້ານຂອງຈຳນວນ 15 ບ້ານ ທີ່ຖືກຍົກຍ້າຍ, ແລະ ສ່ວນ 6 ບ້ານທີ່ຍັງເຫຼືອນັ້ນ 75% ຂອງໂຄງຮ່າງບ້ານໄດ້ສ້າງ ສຳເລັດແລ້ວ ລວມເຖິງຫຼັງຄາເຮືອນ. ສ່ວນເຮືອນທີ່ຍັງເຫຼືອທັງໝົດ ແມ່ນຄາດວ່າຈະ ສຳເລັດກ່ອນ ການປິດປະຕູປິດນ້ຳ ຢູ່ເຂື່ອນນາກາຍ ໃນກາງເດືອນມິຖຸນາ 2008. ຍັງເຫຼືອເວລາອີກບໍ່ຫຼາຍ ແລະ ກໍມີການຕິດຕາມ ຢ່າງໃກ້ຊິດ. ໃນຈຳນວນນ້ຳສ້າງ 240 ແຫ່ງ ທີ່ຈະຕ້ອງໄດ້ຂຸດ ເພື່ອໃຫ້ບັນລຸຕາມເປົ້າໝາຍທີ່ວ່າງໄວ້ ວ່າຈະສະໜອງນ້ຳສ້າງ ໜຶ່ງແຫ່ງ ຕໍ່ 5 ຄົວເຮືອນ, ປະຈຸບັນ ນ້ຳສ້າງຈຳນວນ 200 ແຫ່ງໄດ້ມີການຂຸດເຈາະ ແລະ ປະກອບອຸປະກອນ. ບໍລິສັດໄຟຟ້ານ້ຳເທີນ 2 ຄາດວ່າ ຈະຂຸດເຈາະ ຈຳນວນນ້ຳສ້າງທີ່ຍັງເຫຼືອ ໃຫ້ສຳເລັດ ພາຍໃນເດືອນພຶດສະພາ 2008. ທົນທາງເຂົ້າເຖິງບ້ານ ຂອງປະຊາຊົນ ທີ່ອາໃສຢູ່ທາງພາກໃຕ້ ຂອງບ້ານທີ່ຖືກຍົກຍ້າຍ ຍັງບໍ່ທັນສຳເລັດເທື່ອ ແຕ່ວ່າການເຂົ້າເຖິງແຕ່ລະບ້ານ ແມ່ນສາມາດເຂົ້າເຖິງໄດ້ ແລະ ກຳລັງມີການເລັ່ງການກໍ່ສ້າງເພື່ອໃຫ້ສຳເລັດ ພາຍໃນເດືອນມິຖຸນາ 2008. ການກໍ່ສ້າງໂຮງຮຽນປະຖົມ ແລະ ສູນສຸຂະພາບ ກໍຄາດວ່າຈະສຳເລັດພາຍໃນ ໄລຍະເວລາດຽວກັນ. ປະຈຸບັນ ຈຳນວນ 5 ບ້ານໄດ້ມີໄຟຟ້າໃຊ້ແລ້ວ ແລະ ຄາດວ່າປະຊາຊົນທີ່ຖືກຍົກຍ້າຍ ທັງໝົດຈະມີໄຟຟ້າໃຊ້ ພາຍໃນວັນທີ 15 ມິຖຸນາ 2008. ສຳລັບບ້ານທີ່ຍັງບໍ່ທັນໄດ້ເຊື່ອມຕໍ່ ກັບສາຍໄຟຟ້າ 22 kV, ຈະມີການຕິດຕັ້ງຈັກປັ່ນໄຟຟ້າ ທີ່ໃຊ້ນ້ຳມັນກາຊວນໃຫ້. ພ້ອມກັນນັ້ນ ບໍລິສັດໄຟຟ້ານ້ຳເທີນ 2 ກໍຈະສະໜອງເລົ້າເຂົ້າ ທີ່ມີຫຼັງຄາ ແລະ ຖັງຂີ້ເຫຍື້ອ ໃຫທຸກໆຄົວເຮືອນ ພ້ອມກັນນັ້ນ ກໍຍັງຈະສ້າງສະຖານທີ່ຖິ້ມຂີ້ເຫຍື້ອໃຫ້ອີກດ້ວຍ. ສິ່ງອຳນວຍຄວາມສະດວກອື່ນໆ ກຳລັງດຳເນີນໄປຕາມຄາດໝາຍ ຄາດວ່າຈະສຳເລັດກ່ອນ ວັນທີ 15 ມິຖຸນາ 2008 ໃນນັ້ນລວມມີ ຮົ້ວລ້ອມບ້ານ, ບອ່ນກ້າຕົ້ນໄມ້, ໂຮງສີເຂົ້າບ້ານ, ຫ້ອງປະຊຸມບ້ານ ແລະ ເດີນຫຍ້າເພື່ອລ້ຽງງົວຄວາຍ.

6. *ໄດ້ມີບາງບັນຫາກ່ຽວກັບການສະໜອງເຂົ້າ ແລະ ທາດໂປຕີນ ໃຫ້ແກ່ປະຊາຊົນທີ່ຖືກຍົກຍ້າຍ.* ລັດຖະບານໄດ້ຢືນຢັນວ່າ ຈະສືບຕໍ່ສະໜອງເຂົ້າໃຫ້ແກ່ປະຊາຊົນທີ່ຖືກຍົກຍ້າຍ ຈົນກ່ວາພວກເຂົາຈະສາມາດປູກເຂົ້າເພື່ອກຸ້ມຕົນເອງໄດ້. ການສະໜອງທາດໂປຕີນ ຈະຈົບລົງພາຍຫຼັງຄົບ 37 ອາທິດ (ອີງຕາມການແນະນຳຈາກປະສົບການທີ່ຜ່ານມາ) ເພື່ອຫຼຸດຜ່ອນຄວາມສ່ຽງຕໍ່ການເອ່ງອີງ; ແຕ່ເຖິງຢ່າງໃດກໍຕາມ, ຄົວເຮືອນທີ່ດ້ອຍໂອກາດ ຈະໄດ້ຮັບການຕິດຕາມຢ່າງໃກ້ຊິດ ແລະ ຈະສືບຕໍ່ໃຫ້ການຊ່ວຍເຫຼືອ ແກ່ຄອບຄົວທີ່ດ້ອຍໂອກາດ ອີງຕາມຄວາມຕ້ອງການຂອງເຂົາເຈົ້າ. ການກວດສຸຂະພາບໃນທຸກໆສອງອາທິດ ກຳລັງມີການຈັດຕັ້ງປະຕິບັດ. ເຫດການກ່ຽວກັບ ພະຍາດໄຂຍຸງ ແລະ ແມງໄມ້ ໄດ້ຫລຸດລົງຢ່າງຫຼວງຫຼາຍ ຍ້ອນວຽກງານດ້ານສາທາລະນະສຸກ ແລະ ຍອ້ນສຸຂະພາບຂອງປະຊາຊົນທີ່ດີຂຶ້ນ.

7. ***ການເປັນຢູ່ຂອງປະຊາຊົນ ທີ່ຖືກຍົກຍ້າຍ ໄດ້ຮັບການຕິດຕາມເອົາໃຈໃສ່ຢ່າງໃກ້ຊິດ ໂດຍສະຖາບັນການເງິນສາກົນ ເພື່ອຮັບປະກັບວ່າ ຈະມີການປະຕິບັດງານຢ່າງທັນການ ຖ້າຫາກວ່າ ລາຍຮັບຂອງປະຊາຊົນ ມີການຫລຸດລົງກອ່ນທີ່ ທາງເລືອກດ້ານການປັບປຸງຊີວິດການເປັນຢູ່ ຈະໄດ້ຮັບການສ້າງຂື້ນ ຢ່າງເຕັ້ມສວ່ນ.*** ມັນຮຽກຮ້ອງໃຫ້ ບໍລິສັດຜູ້ລົງທຶນ ຮັບປະກັນວ່າ ລາຍຮັບຂອງປະຊາຊົນ ທີ່ຖືກຍົກຍ້າຍ ຈະເພີ້ມຂື້ນ ສອງທົບ ພາຍໃນໄລຍະເວລາ 5 ປີ ຫຼັງຈາກຖືກຍົກຍ້າຍ (ຄາດວ່າໃນໄລຍະ 2011/2012). ຈຸດປະສົງຂອງໂຄງການຍັງຄົງ ຍຶດໝັ້ນໃນການຮັບປະກັນວ່າ ປະຊາຊົນຜູ້ທີ່ຖືກຜົນກະທົບ ຮ້າຍແຮງໂດຍກົງ ຈະສາມາດ ຮັບຜົນປະໂຫຍດຈາກໂຄງການ ແລະ ຄວາມພະຍາຍາມທີ່ຈະເຮັດໃຫ້ ຈຸດປະສົງດັ່ງກ່າວປະກົດຜົນເປັນຈິງ ແມ່ນເປັນໄປຢ່າງຈິງຈັງ. ໃນນັ້ນລວມເຖິງ ການຊ່ວຍເຫຼືອ ທາງດ້ານວິຊາການ ແລະ ການຕິດຕາມ ເພື່ອຮັບປະກັນວ່າ ການຊວ່ຍເຫຼືອຕ່າງໆທີ່ຕ້ອງການ ຈະສາມາດ ສະໜອງໃຫ້ພວກເຂົາໄດ້. ຂໍ້ມູນທີ່ເຊື່ອຖືໄດ້ກ່ຽວກັບ ການປ່ຽນແປງຂອງລາຍຮັບ ຂອງປະຊາຊົນ ແມ່ນຍັງບໍ່ທັນມີ. ການສຳຫລວດການວັດແທກ ມາດຖານການເປັນຢູ່ ຄັ້ງທີສອງ ໄດ້ຈັດຕັ້ງປະຕິບັດ ໃນເດືອນ ມິຖຸນາ 2007 ແລະ ກຳລັງມີການ ວິເຄາະຂໍ້ມູນ. ໃນຂະນະດຽວກັນ, ຂໍ້ມູນເບື້ອງຕົນຈາກ ການສຶກສາ ຈາກບ້ານທົດລອງ ໄດ້ຊີ້ໃຫ້ເຫັນວ່າ ລາຍຮັບທີ່ຫຼຸດລົງໃນປີ 2007 (ໂດຍໄດ້ມີການເພີ້ມຂື້ນຈາກປີກ່ອນ ແລະ ເຖິງແມ່ນວ່າ ຈຳນວນ 80% ຂອງຄົວເຮືອນ ມີລາຍຮັບເກີນການຄາດຄະເນໄວ້ ກໍຄື 820 ໂດລ້າສະຫະລັດ ຕໍ່ປີ) ສ່ວນໜຶ່ງຍ້ອນວ່າ ໂຄງການໄດ້ສ້າງວຽກເຮັດງານທຳ ໂດຍສະເພາະແມ່ນວຽກກໍ່ສ້າງ. ມີຄວາມຄິດທີ່ຫຼາກຫຼາຍ ແລະ ແຕກຕ່າງກັນໄປ ກ່ຽວກັບລາຍຮັບໃນປີ 2008 ບົດສຳຫຼວດໄດ້ຊີ້ໃຫ້ເຫັນວ່າ ລາຍຮັບ ຂອງຄົວເຮືອນຈະດີຂື້ນກວ່າເກົ່າ, ແຕ່ວ່າ ຫຼັງຈາກການຢ້ຽມຍາມໂຄງການ ຂອງທີມງານຜູ້ຊ່ຽວຊານດ້ານສິ່ງ ແວດລ້ອມ ແລະ ສັງຄົມ ໄດ້ຊີ້ໃຫ້ເຫັນວ່າ ລາຍຮັບອາດຈະຫຼຸດລົງຫຼາຍກ່ວາເກົ່າ ຍ້ອນວ່າ ການຫຼຸດຜ່ອນທາງດ້ານໂອກາດ ໃນການຈ້າງແຮງງານກໍ່ສ້າງ ແລະ ມັນຍັງເປັນໄປໄດ້ອີກວ່າ ການກັກນ້ຳເຂົ້າອ່າງ ຈະສົ່ງຜົນກະທົບ ຕໍ່ການດຳລົງຊີວິດຂອງປະຊາຊົນ. ບົດລາຍງານຄົບທ້ວນ ຈາກການສຳ ຫລວດການວັດແທກ ມາດຖານການເປັນຢູ່ ຄາດວ່າ ຈະໃຫ້ຂໍ້ມູນທີ່ຈະແຈ້ງ ກ່ຽວກັບ ສະພາບ ຂອງມາດຕະຖານການດຳລົງຊີວິດ ຂອງບ້ານທີ່ຖືກຍົກຍ້າຍ ແລະ ສາມາດຊ່ວຍໃນການ ອອກແບບແຜນງານຮັບມືກັບເຫດການ ທີ່ອາດຈະເກີດຂື້ນ.

8. ***ການຍົກຍ້າຍ ປະຊາຊົນ ເຜົ່າອາເຣີ ຢ່າງຖາວອນ ຈາກ ບ້ານສົບເຫ້ຍ ຍັງຄົງເປັນບັນຫາ ທີ່ຕ້ອງມີ ການຕິດຕາມຢ່າງໃກ້ຊິດ.*** ບັນຫາກ່ຽວກັບ ເຂດຈັດສັນທີ່ແທ້ຈິງ ໄດ້ຮັບການແກ້ໄຂ ໂດຍໃຊ້ລະບົບ ການມີສ່ວນຮ່ວມ ກັບ 14 ຄອບຄົວ ຊົນເຜົ່າ ອາເຣີ ຈາກບ້ານສົບເຫ້ຍ ແລະ ພ້ອມກັນກັບ ການມີສ່ວນຮວ່ມ ຂອງປະຊາຊົນ ຈາກບ້ານສົບເຫ້ຍ ແລະ ບ້ານນ້ຳນ່ຽນ. ປະຊາຊົນໄດ້ມີຄຳເຫັນວ່າ ພວກເຂົາ ຕ້ອງການທີ່ຈະຢູ່ພາຍໃນຂອບເຂດທີ່ມີຄວາມສຳຄັນ ທາງດ້ານສາດສະໜາຂອງພວກເຂົາ ແລະ ໃນທີ່ສຸດ ພວກເຂົາ ກໍຖືກຍົກຍ້າຍ ຂື້ນໄປຢູ່ເຂດທີ່ສູງ ກວ່າເກົ່າ ແຕ່ຍັງໃກ້ກັບເຂດທີ່ເຂົາເຈົ້າ ອາໃສຢູ່ແຕ່ກ່ອນ.

ຍ້ອນຄວາມສັບຊ້ອນ ຂອງບັນຫາດັ່ງກ່າວ ໄດ້ມີການ ຂໍຄຳແນະນຳ ຈາກ ທີມງານຜູ້ຊ່ຽວຊານດ້ານສິ່ງແວດລ້ອມ ແລະ ສັງຄົມ ຢ່າງເປັນປະຈຳ. ມີການວາງແຜນ ທີ່ຈະມີການປຶກສາຫາລືເພີ່ມເຕີມ ກັບຄອບຄົວດັ່ງກ່າວນີ້ ໃນໄລຍະເດືອນຕໍ່ໜ້າ ແລະ ຫຼັງຈາກການປະຕິບັດດັ່ງກ່າວນີ້, ຈະໄດ້ມີການອອກແບບແຜນງານກວມລວມ ໃນການໃຫ້ສິດເປັນເຈົ້າຂອງ ໃຫ້ຖືກຕ້ອງຕາມຄວາມເໝາະສົມ. ຊຶ່ງໃນນັ້ນລວມເຖິງ ການສະໜອງເຮືອ ເພື່ອຫາປາ ແລະ ເພື່ອໃຊ້ຄົມມະນາຄົມໃນເຂດອ່າງເກັບນ້ຳ, ທີ່ສິ່ງນ້ຳ, ໂຮງຮຽນ ແລະ ສູນອະນາໄມ, ການຊ່ວຍເຫຼືອດ້ານການລ້ຽງສັດ ລວມເຖິງ ສັດໃຫຍ່, ການເຂົ້າເຖິງ ເຄື່ອງປ່າຂອງດົງ ແລະ ສວນຜັກ. ສະຖາບັນການເງິນສາກົນ ຈະສືບຕໍ່ຕິດຕາມ ສະພາບການ ແລະ ໃຫ້ຄຳແນະນຳ ຕາມຄວາມຕ້ອງການ.

9. ***ການເຂົ້າເຖິງການຫາປາໃນເຂດອ່າງເກັບນ້ຳ ແມ່ນບັນຫາທີ່ສຳຄັນ.*** ດຳລັດນາຍົກລັດຖະມົນຕີ ເລກທີ 24/ນຍ ວ່າດ້ວຍ ການໃຫ້ສິດແກ່ປະຊາຊົນທີ່ຖືກຍົກຍ້າຍ ໃນການຫາປາ, ຂາຍປາ ແລະ ປຸງແຕ່ງປາ ໃນອ່າງເກັບນ້ຳ, ແລະ ການນຳໃຊ້ເຂດນ້ຳແຫ້ງ ໃນໄລຍະເວລາ 10 ປີ ໄດ້ຖືກຮັບຮອງໃນ ວັນທີ 13 ກຸມພາ 2008. "ດຳລັດ 3 ໃນ 1" ສະບັບນີ້ ຍັງໄດ້ມີການສ້າງຕັ້ງ ອົງການຄຸ້ມຄອງອ່າງໂຕ່ງ. ໃນຂະນະດຽວກັນ ບໍລິສັດໄຟຟ້ານ້ຳເທີນ 2 ກໍໄດ້ແຕ່ງຕັ້ງ ຜູ້ປະສານງານ ດ້ານການຫາປາໃນອ່າງໂຕ່ງ ເພື່ອສ້າງແຜນງານ, ແລະ ມີການສ້າງເຮືອ ເພື່ອສະໜອງໃຫ້ແກ່ປະຊາຊົນໃນການຫາປາ ເພື່ອກຸ້ມຢູ່ກຸ້ມກິນ. ໜ້າທີ່ໃນການສະໜອງເຮືອ ຂະໜາດນ້ອຍ ຈຳນວນ 650 ລຳ (ເຮືອລຳໜຶ່ງ ຕໍ່ ສອງຄອບຄົວ) ກຳລັງມີການດຳເນີນຢູ່ ແລະ ຄາດວ່າຈະສຳເລັດພາຍໃນ ເດືອນເມສາ 2008.

10. ***ແຜນງານໃນການອະນາໄມຈຸລະມູນສານຈຳນວນໜຶ່ງ ຢູ່ໃນເຂດທີ່ຈະຖືກນ້ຳຖ້ວມຖາວອນ ຈະສຳເລັດລົງຢ່າງສົມບູນ ກ່ອນການກັກນ້ຳເຂົ້າອ່າງ.*** ກິດຈະກຳການອະນາໄມຈຸລະມູນສານ ແມ່ນອີງໃສ ສອງຈຸດປະສົງໃຫຍ່ຄື: ຫລຸດຜ່ອນຜົນກະທົບ ຂອງຈຸລະມູນສານ ຕໍ່ຄຸນນະພາບຂອງນ້ຳ (ບັນຫາທີ່ມັກຈະເກີດຂຶ້ນ ກັບອ່າງເກັບນ້ຳທີ່ສ້າງໃໝ່) ແລະ ປັບປຸງເສັ້ນທາງນ້ຳ ແລະ ການຫາປາ ຂອງປະຊາຊົນທີ່ຖືກຍົກຍ້າຍ ໃຫ້ດີຂຶ້ນກວ່າເກົ່າ. ໂດຍອີງໃສບົດຄົ້ນຄ້ວາ ຂອງ ບໍລິສັດໄຟຟ້ານ້ຳເທີນ 2 ແລະ ຂໍ້ມູນຕ່າງໆທີ່ມີຢູ່ ລວມເຖິງການປະເມີນຜົນ ທາງເລືອກໃນການອະນາໄມຈຸລະມູນສານ ຂອງທະນາຄານໂລກ ທີ່ໄດ້ຈັດຕັ້ງປະຕິບັດ ໃນເດືອນ ກໍລະກົດ 2007, ການຢ້ຽມຢາມໂຄງການຂອງ ສະຖາບັນການເງິນສາກົນ ທີ່ໄດ້ແນະນຳໃຫ້ ບໍລິສັດໄຟຟ້ານ້ຳເທີນ 2 ມີການອະນາໄມ ຈຸລະມູນສານ ໃຫ້ໄດ້ຫຼາຍ ເທົ່າທີ່ຈະຫຼາຍໄດ້ ໃນເຂດທີ່ຢູ່ຕ່ຳກວ່າລະດັບຕ່ຳສຸດ ຂອງລະດັບນ້ຳທີ່ສາມາດດຳເນີນການຜະລິດໄດ້ (MOL) ທີ່ຈະຖືກນ້ຳທວມຖາວອນ. ອີງຕາມບົດລາຍງານຕ່າງໆ ທີ່ກ່າວມານີ້, ລັດຖະບານ ແລະ ບໍລິສັດໄຟຟ້ານ້ຳເທີນ 2 ໄດ້ຕັດສິນໃຈອະນາໄມຈຸລະມູນສານ ຈາກເນື້ອທີ່ຢ່າງໜ້ອຍ 1.500 ເຮັກຕາ, ຈຳນວນ 1.500 ເຮັກຕາ ທີ່ຍັງເຫຼືອ ແມ່ນໄດ້ອະນາໄມ ສຳເລັດແລ້ວ. ວຽກງານດັ່ງກ່າວ ຄາດວ່າຈະສຳເລັດ ພາຍໃນວັນທີ 31 ມີນາ 2008. ການອະນາໄມນອກເໜືອຈາກ ເຂດທີ່ຢູ່ຕ່ຳກວ່າລະດັບຕ່ຳສຸດ ຂອງລະດັບນ້ຳທີ່ສາມາດດຳເນີນການ

ຜະລິດໄດ້ ຈະເກີດຂຶ້ນຫຼັງຈາກມີການລິເລີ່ມການກັກນ້ຳໃນອ່າງເກັບນ້ຳ ເພາະນັ້ນຈະເປັນເວລາທີ່ສາມາດເຂົ້າເຖິງເຂດນ້ຳແຫ້ງໄດ້. ການອະນາໄມອ່າງເກັບນ້ຳ ກຳລັງດຳເນີນໄປ ຊຶ່ງໄດ້ມີການຕັດໄມ້ ແລະ ຈູດໄມ້ ໂດຍບໍລິສັດຮັບເໝົາ ທີ່ໄດ້ຮັບການຕິດຕາມຢ່າງໃກ້ສິດຈາກ ກະຊວງກະສິກຳ ແລະ ປ່າໄມ້ ໂດຍການສະໜູນດ້ານການເງິນຈາກ ບໍລິສັດໄຟຟ້ານ້ຳເທີນ 2.

11. *ການປັບປຸງຊີວິດການເປັນຢູ່ແບບຍືນຍົງ ແລະ ການສ້າງລາຍຮັບ ໃຫ້ໄດ້ຕາມຄາດໝາຍທີ່ວາງອອກຍັງເປັນບັນຫາທີ່ ທ້າທາຍ ແລະ ຫຍຸ້ງຍາກ, ແຕ່ມັນແມ່ນບັນຫາທີ່ຈະຕ້ອງ ເຮັດໃຫ້ປະສົບຜົນສຳເລັດ.* ລາຍຮັບທີ່ຄາດໄວ້ ປະມານ 280 ໂດລ້າສະຫະລັດ ຕໍ່ຄອບຄົວ ຈະຕ້ອງເຮັດໃຫ້ສຳເລັດ ພາຍໃນໄລຍະເວລາຫ້າເດືອນ ຫຼັງຈາກມີການຍົກຍ້າຍ. ຫຼັງຈາກໂຄງການໄດ້ມີການເລີ່ມກໍ່ສ້າງ ວຽກງານທາງເລືອກໃນການປັບປຸງຊີວິດການເປັນຢູ່ ແມ່ນມີຄວາມຊັກຊ້າ ໃນການຈັດຕັ້ງປະຕິບັດ. ລັດຖະບານ, ບໍລິສັດໄຟຟ້ານ້ຳເທີນ 2 ແລະ ສະຖາບັນການເງິນສາກົນ ໄດ້ມີມາດຕະການຢ່າງຮີບດ່ວນໃນການແກ້ໄຂກັບບັນຫາດັ່ງກ່າວ ລວມເຖິງ ການຈັດການຝຶກອົບຮົມເພີ່ມເຕີມ, ການສ້າງຄວາມອາດສາມາດ ແລະ ການຊ່ວຍເຫຼືອທາງດ້ານວິຊາການ ໃຫ້ແກ່ປະຊາຊົນທີ່ອາໄສຢູ່ເຂດພູພຽງນາກາຍ. ທຸກໆພາກສ່ວນທີ່ກ່ຽວຂ້ອງໄດ້ເຂົ້າໃຈຢ່າງເລິກເຊິ່ງວ່າ ຄວາມຊັກຊ້າ ໃນວຽກງານປັບປຸງຊີວິດການເປັນຢູ່ ແມ່ນປັດໃຈທີ່ສ່ຽງທີ່ສຸດຕໍ່ການຮັບປະກັນວ່າ ປະຊາຊົນ ຈະມີລາຍຮັບເພີ່ມຂຶ້ນຕາມເປົ້າໝາຍ ທີ່ໄດ້ວາງໄວ້. ການຕິດຕາມຄວາມຄືບໜ້າ ຂອງລະດັບລາຍຮັບ ແລະ ວຽກງານປັບປຸງຊີວິດການເປັນຢູ່ ແມ່ນຈະໄດ້ຮັບການເອົາໃຈໃສ່ ຢ່າງໃກ້ຊິດພາຍ ໃນອາທິດ ແລະ ເດືອນຂ້າງໜ້ານີ້. ບາດກ້າວຕໍ່ໄປແມ່ນສຳຄັນທີ່ສຸດ ທີ່ຈະຕ້ອງສືບຕໍ່ວຽກງານ "ການຄຸ້ມຄອງການປັບຕົວ ເຂົ້າກັບສະພາບ" ທີ່ໄດ້ມີການປະຕິບັດຢູ່ ແລະ ນຳເອົາບົດຮຽນຕ່າງໆ ທີ່ໄດ້ຮັບ ມາຊ່ວຍໃນການສ້າງ ກິດຈະກຳປັບປຸງຊີວິການເປັນຢູ່ແບບໃໝ່.

12. *ໂຄງການພັດທະນາຊີວິດການເປັນຢູ່ ໃນເຂດພູພຽງ ກຳລັງໄດ້ຮັບການຈັດຕັ້ງປະຕິບັດ.* ດັ່ງທີ່ໄດ້ກ່າວໄວ້ໃນບົດລາຍງານຄວາມຄືບໜ້າ ຂອງເດືອນ ທັນວາ 2007, ເຂດຍົກຍ້າຍ ໄດ້ແບ່ງອອກເປັນ ສາມເຂດ ຫຼື ສາມສັດສ່ວນ ທີ່ແຕກຕ່າງກັນ ໂດຍອີງຕາມຄວາມແຕກຕ່າງໃນການເຂົ້າເຖິງດິນ, ປ່າ, ເດີນຫຍ້າ ແລະ ປາ. ອີງຕາມການຄາດຄະເນ ໃນຕໍ່ໜ້າວ່າ ເຂດໃດໜຶ່ງ ຈະມີຄວາມໜ້າແໜ້ນຂອງປະຊາກອນເພີ້ມຂຶ້ນ ດັ່ງນັ້ນເຂດພາກເໜືອ ຊຶ່ງເປັນເຂດທີ່ເໝາະສົມສຳລັບລ້ຽງງົວຄວາຍ ໄດ້ຮັບການຂະຫຍາຍເນື້ອທີ່ ໃຫ້ກວ້າງອອກໄປເຖິງ 2.600 ເຮັກຕາ ອີງຕາມລຳລັດນາຍົກລັດຖະມົນຕີ ເລກທີ 24/ນຍ. ເນື້ອທີ່ດິນ 0.66 ເຮັກຕາ ຊຶ່ງເປັນເນື້ອທີ່ ທີ່ໄດ້ຈັດສັນໃຫ້ແຕ່ລະຄອບຄົວ ເພື່ອການກະສິກຳ ໄດ້ມີການຖາງ ສຳເລັດແລ້ວ, ແລະ ປະຈຸບັນປະມານ 80% ຂອງດິນຈຳນວນ 1.250 ຕອນ ໄດ້ສ້າງຮົ້ວລ້ອມໄວ້ແລ້ວ ແລະ ຄາດວ່າ ການປັບໜ້າດິນໃຫ້ສະໝ່ຳສະເໝີ ຈະສຳເລັດພາຍໃນ ວັນທີ 15 ມິຖຸນາ 2008.

13. *ການພັດທະນາລະບົບ ຊົນລະປະທານ ແລະ ການລ້ຽງສັດ ກໍແມ່ນບັນຫາທີ່ທ້າທາຍຄືກັນ.* ວິທີການຢ່າງລະມັດລະວັງ ແມ່ນໄດ້ຖືກນຳໃຊ້ເຂົ້າໃນການສ້າງຊົນລະປະທານ ໃນເຂດຍົກຍ້າຍ ໂດຍຄຳໜຶງເຖິງ ລາຍຈ່າຍໃນການລົງທຶນ ແລະ ການຜະລິດ ທີ່ກ່ຽວພັນກັບການສ້າງ ນຳ້ສ້າງທີ່ມີຄວາມເລິກ ເພື່ອໃຊ້ໃນການໂປ້ມນຳ້ ແລະ ໜ້າດິນທີ່ໃຊ້ໃນການແຈກຢາຍນຳ້. ວິທີການປຶກສາຫາລື ແລະ ການທົດສອບ ໄດ້ຖືກຮັບຮອງເອົາ ແລະ ບັນຫາດັ່ງກ່າວ ອາດຈະໃຊ້ເວລາໃນການແກ້ໄຂຍາວນານເຖິງ ມື້ເລີ່ມການຜະລິດ ທ່າງທຸລະກິດ. ກິດຈະກຳການລ້ຽງສັດ ແມ່ນສິ່ງທີ່ສຳຄັນ ຕໍ່ວຽກງານປັບປຸງຊີວິດການເປັນຢູ່. ໃນມໍ່ໆມານີ້ ໄດ້ມີການລາຍງານ ກ່ຽວກັບການຕາຍຂອງຄວາຍຈຳນວນໜຶ່ງ ແລະ ມັນມີຄວາມເປັນໄປໄດ້ວ່າ ເຫດຜົນກໍຍອັນ ການຫຼຸດລົງຂອງເດີນຫຍ້າ ຍອັນນຳ້ຖວມ ຊຶ່ງເປັນຜົນມາຈາກ ຜົນທີ່ຕົກໜັກໃນເດືອນຕຸລາ 2007 ແລະ ຍອັນວ່າໂຄງການໄດ້ຫຼຸດເນື້ອທີ່ຂອງເດີນຫຍ້າລົງ. ຖ້າຫາກວ່າຂໍ້ມູນທີ່ກຳລັງ ມີການເກັບກຳຢູ່ ຢືນຢັນ ວ່າເຫດການທີ່ກ່າວມານີ້ເປັນຄວາມຈິງ, ສະຖາບັນການເງິນສາກົນ ຈະໄດ້ອອກມາດຕະການແກ້ໄຂ ຢ່າງຮີບດວນ ລວມເຖິງການປະຕິບັດຕາມ ຄຳແນະນຳ ຂອງທີມງານຜູ້ຊ່ຽວຊານດ້ານສິ່ງແວດລ້ອມ ແລະ ສັງຄົມ ວ່າໃຫ້ມີການຫຼຸດຜ່ອນຈຳນວນຄວາຍລ້ຽງ ໂດຍສະເພາະແມ່ນການກຳຈັດ ຄວາຍໂຕທີ່ອ່ອນແອ ໂດຍມີການປຶກສາຫາລືກັບ ເຈົ້າຂອງຄວາຍ ແລະ ເງິນທີ່ຊົດເຊີຍ ແມ່ນຄິດໄລເປັນເງິນທີ່ໃຊ້ຊົດເຊີຍ ຄວາຍ ທີ່ແຂງແຮງ.

14. ***ດັ່ງນັ້ນ ການທີ່ຕ້ອງມີເດີນຫຍ້າສຳລັບລ້ຽງສັດ ແມ່ນບັນຫາທີ່ສຳຄັນ.*** ແຜນງານທີ່ຈະນຳໃຊ້ ເຂດນຳ້ແຫ້ງ ໃຫ້ເປັນປະໂຫຍດຫຼາຍທີ່ສຸດ ແມ່ນກຳລັງໄດ້ຮັບການສ້າງຂຶ້ນ. ໃນການກະກຽມ ການເຂົ້າເຖິງເຂດນຳ້ແຫ້ງ, ຈະຕ້ອງມີການສ້າງຮອ່ງນຳ້ເພື່ອໃຫ້ຫຍ້າ ແລະ ພືດທີ່ຈຳເປັນ ສາມາດເກີດຂຶ້ນໄດ້ ແລະ ລວມເຖິງ ພືດທີ່ມີລາຄາ, ພືດທີ່ສາມາດເກັບກ່ຽວໄດ້ໄວ, ເຂົ້າຟາງ ແລະ ຖົ່ວຂຽວ.

15. ***ການຕັດໄມ້ອອກຈາກອ່າງ ໃກ້ຈະສຳເລັດແລ້ວ.*** ໃນວັນທີ 4 ກຸມພາ 2008, ອຳນາດການປົກຄອງແຂວງ ໄດ້ອອກແຈ້ງການ ເພື່ອປິດຫົນທາງທີ່ໃຊ້ໃນການລຳລຽງ ໄມ້ທີ່ຕັດອອກຈາກອ່າງ ແລະ ແຈ້ງການດັ່ງກ່າວ ຈະຕ້ອງມີການຈັດຕັ້ງປະຕິບັດຢ່າງຮີບດ່ວນ. ໄມ້ທີ່ມີລາຄາແມ່ນໄດ້ຕັດສຳເລັດແລ້ວ ແລະ ຊາຍແດນແບ່ງເຂດ ກໍມີການປະຕິບັດຕາມ ແລະ ເອົາໃຈໃສ່ ຢ່າງຈິງຈັງ. ບົດລາຍງານຄວາມຄືບໜ້າ ຂອງເດືອນພຶດສະພາ 2007 ໄດ້ຊີ້ໃຫ້ເຫັນວ່າ ການຕັດໄມ້ອອກຈາກອ່າງ ບໍ່ໄດ້ສົ່ງຜົນກະທົບອັນຮ້າຍແຮງ ໃຫ້ແກ່ປະຊາຊົນທ້ອງຖິ່ນ ແລະ ບໍ່ມີຫຼັກຖານຂອງ ການຕັດໄມ້ຜິດກົດໝາຍ ໃນເຂດອ່າງໂຕ່ງ ຫຼື ເຂດປ່າໄມ້ຂອງ ສະມາຄົມປ່າໄມ້ຊາວບ້ານ, ນອກເໜືອຈາກການຕັດໄມ້ຂະຍຸງ. ຜົນເສຍຫາຍຕ່າງໆ ທີ່ເກີດຂຶ້ນຕໍ່ຫົນທາງ ຍອັນການລຳລຽງໄມ້ ທີ່ຕັດອອກຈາກອ່າງ ແມ່ນໄດ້ຮັບການຕິດຕາມ ແລະ ຈະໄດ້ຮັບການແກ້ໄຂ.

16. *ໂຄງການສັດປ່າ ກໍາລັງມີຄວາມຄືບໜ້າເປັນຢ່າງດີ ແລະ ໃນມໍ່ໆມານີ້ ກໍໄດ້ມີການເຜີຍແຜ່ບົດລາຍງານຂໍ້ມູນເພີ່ມເຕີມ ກ່ຽວກັບສະພາບ ປະຊາກອນສັດປ່າ ໃນເຂດໂຄງການ.* ໂຄງການຄຸ້ມຄອງ ແລະ ຕິດຕາມສັດປ່າ ໄດ້ສ້າງຂື້ນ ແລະ ໄດ້ແບ່ງອອກ ເປັນ ສອງໄລຍະຄື: (i) ສໍາລັບແນວພັນສັດປ່າທີ່ອາໃສຢູ່ເຂດນັ້ນ ກ່ອນການກັກນໍ້າເຂົ້າອ່າງ ແລະ ການສໍາຫຼວດທີ່ຢູ່ອາໃສຂອງສັດປ່າ ແລະ ການພັດທະນາແຜນງານຄຸ້ມຄອງສັດປ່າ ກ່ອນການກັກນໍ້າເຂົ້າອ່າງ; (ii) ການຈັດຕັ້ງປະຕິບັດແຜນງານຄຸ້ມຄອງ ແລະ ການຝຶກອົບຮົມໃຫ້ແກ່ພະນັກງານ ທີ່ກ່ຽວຂ້ອງຂອງລັດຖະບານ ເພື່ອຈັດຕັ້ງປະຕິບັດວຽກງານທີ່ຍັງເຫຼືອ. ບົດລາຍງານຄວາມຄືບໜ້າສະບັບລ້າສຸດ ໄດ້ໃຫ້ຂໍ້ມູນຫຼາຍຢ່າງກ່ຽວກັບ ຄວາມຄືບໜ້າ ຂອງວຽກງານດັ່ງກ່າວ. ເຖິງວ່າການຈັດຕັ້ງປະຕິບັດກໍາລັງດໍາເນີນຢູ່, ບໍລິສັດໄຟຟ້ານໍ້າເທີນ 2 ຈະຕ້ອງ ໄດ້ສະໜອງແຜນງານສະບັບສົມບູນ.

17. ***ສະມາຄົມປ່າໄມ້ຊາວບ້ານ ໄດ້ສໍາເລັດໜ້າທີ່ຂອງຕົນ ໃນການສະໜອງໄມ້ ໃຫ້ແກ່ການສ້າງໂຮງຮຽນ ແລະ ສ້າງສິ່ງກໍ່ສ້າງສໍາລັບຊຸມຊົນ.*** ໃນປະຈຸບັນ, ສະມາຄົມປ່າໄມ້ຊາວບ້ານ ກໍາລັງປຸງແຕ່ງໄມ້ຂະໜາດນ້ອຍເພື່ອຫັດຖະກໍາ ແລະ ເຮັດໂຕະຕັ່ງໃຫ້ແກ່ໂຮງຮຽນ ແລະ ຫ້ອງການບ້ານ. ກໍາລັງມີການດໍາເນີນການຝຶກອົບຮົມໃຫ້ແກ່ຊາວບ້ານ ໃນການເລື່ອຍໄມ້, ຄວັດລາຍໄມ້ ແລະ ການເຮັດໂຕະຕັ່ງ. ໃນຂະນະດຽວກັນ, ສະມາຄົມປ່າໄມ້ຊາວບ້ານ ໄດ້ຈ້າງໃຫ້ ກົມຕິດຕາມປ່າໄມ້ ແລະ ແຜນການ ຂອງ ກະຊວງກະສິກໍາ ແລະ ປ່າໄມ້ໃນການຈັດຕັ້ງປະຕິບັດການລໍາຫຼວດ ການຄຸ້ມຄອງປ່າໄມ້ ແລະ ການຕິດຕາມເຂດປ່າໄມ້ ຂອງສະມາຄົມປ່າໄມ້ຊາວບ້ານ. ໃນບາດກ້າວຕໍ່ໄປ ຕ້ອງມີກົນໄກ ໃນການມອບຮັບໜ້າທີ່ ຈາກລັດໃຫ້ແກ່ສະມາຄົມໃຫ້ໄດ້ ຫຼັງຈາກປີ 2008, ຊຶ່ງປະຈຸບັນ ລັດເປັນຜູ້ນໍາພາໃນການສ້າງຄວາມອາດສາມາດ ໃຫ້ແກ່ສະມາຄົມ. ລັດຖະບານ ໄດ້ນໍາເອົາມາດຕະການ ໃນການປ້ອງກັນ ການມອບປ່າ ຈໍານວນ 1.500 ເຮັກຕາໃຫ້ແກ່ຕົວເມືອງອຸດົມສຸກ ນໍາໃຊ້, ແລະ ພ້ອມກັນນັ້ນກໍຍັງໄດ້ມອບສິດ ໃນການນໍາໃຊ້ປ່າ ອີງຕາມດໍາລັດນາຍົກລັດຖະມົນຕີ ແລກທີ 24/ນຍ, ເພື່ອຮັບປະກັນຄວາມຊື່ສັດ ຂອງສະມາຄົມປ່າໄມ້ຊາວບ້ານໃນການນໍາໃຊ້ປ່າ.

**ເຂດໂຄງການ**

18. *ກ່ຽວກັບດິນເຂດໂຄງການ, ບໍລິສັດໄຟຟ້ານໍ້າເທີນ 2 ແລະ ລັດຖະບານ ໄດ້ຕົກລົງເຫັນດີ ກ່ຽວກັບນະໂຍບາຍວ່າດ້ວຍການໄດ້ຮັບສິດ ເພື່ອຕອບສະໜອງການສູນເສຍທີ່ດິນເພື່ອການກະສິກໍາ ສໍາລັບປະຊາຊົນທີ່ໄດ້ຮັບຜົນກະທົບຢ່າງໜັກໜ່ວງ.* ສໍາລັບຄອບຄົວທີ່ສູນເສຍຊັບສິນທີ່ນໍາໃຊ້ເຂົ້າໃນການຜະລິດ ເກີນ 10% ຂຶ້ນໄປ ຖືວ່າເປັນຜູ້ທີ່ໄດ້ຮັບຜົນກະທົບຮ້າຍແຮງ. ໃນຂະນະທີ່ ປະຊາຊົນມີຄວາມຕ້ອງການຢາກໃຫ້ການຊົດເຊີຍເປັນໄປໃນຮູບແບບ ດິນຕໍ່ດິນ ເພື່ອປ້ອງກັນບັນຫາຕ່າງໆທີ່ຈະຕາມມາ ຊຶ່ງກ່ຽວພັນກັບຊີວິດການປັນຢູ່ ຖ້າຫາກໃສ່ ການຊົດເຊີຍດ້ວຍເງິນ (ເຊັ່ນ ການນໍາໃຊ້ເງິນແບບບໍ່ເປັນປະໂຫຍດ), ແລະ ຍັງມີກໍລະນີວ່າ ບໍ່ສາມາດສະໜອງເຂດທີ່ດິນໂຄງການ ທີ່ເໝາະສົມ ເພື່ອຈຸດປະສົງດັ່ງກ່າວໄດ້. ໃນກໍລະນີນີ້,

ໄດ້ມີການຕົກລົງໃຫ້ນຳໃຊ້ມາດຕະການແບບສອງໄລຍະຄື ຈ່າຍຄ່າຊົດເຊີຍທີ່ດິນ ເປັນເງິນ ໂດຍເງິນດັ່ງກ່າວ ສາມາດໂອນເຂົ້າບັນຊີພິເສດ ທີ່ສາມາດໃຊ້ເຂົ້າໃນການຊື້ດິນ ທີ່ເໝາະສົມ ຫຼື ສາມາດລົງທຶນເຂົ້າໃນວຽກງານ ປັບປຸງຊີວິດການເປັນຢູ່ອື່ນໆ ຊຶ່ງ ບໍລິສັດໄຟຟ້ານ້ຳເທີນ 2 ແລະ ລັດຖະບານ ຈະເປັນຜູ້ຊວ່ຍເຫຼືອດ້ານວິຊາການ. ວິທີການດັ່ງກ່າວນີ້ ແມ່ນການຕອບສະໜອງ ຕາມຄວາມຕ້ອງການ ຂອງປະຊາຊົນ. ເຖິງຢ່າງໃດກໍຕາມ, ອີງຕາມຄຳແນະນຳ ຂອງທີມງານຜູ້ຊ່ຽວຊານດ້ານສິ່ງແວດລ້ອມ ແລະ ສັງຄົມ ຄວາມເປັນໄປໄດ້ ຂອງການກັບຄືນໄປເລືອກເອົາ ທາງເລືອກ ດິນຕໍ່ດິນ ແມ່ນໄດ້ຮັບຄວາມສົນໃຈຫຼາຍ. ປະຈຸບັນ ລັດຖະບານ ແລະ ບໍລິສັດໄຟຟ້ານ້ຳເທີນ 2 ກຳລັງປະເມີນບັນຫາກ່ຽວກັບທີ່ດິນໂຄງການຢ່າງ ລະມັດລະວັງ ແລະ ທົບທວນຄືນວ່າ ເຂດດິນເພີ່ມເຕີມ ທີ່ເໝາະສົມ ຈະມີຫຼືບໍ່.

**ແຜນງານເຂດກ້ອງເຂື່ອນ**

19. ***ຜົນກະທົບຕໍ່ປະຊາຊົນເຂດກ້ອງເຂື່ອນ ເຖິງວ່າຈະບໍ່ມີການຍົກຍ້າຍກໍ່ຕາມ ແຕ່ວ່າພວກເຂົາ ກໍໄດ້ຮັບຜົນກະທົບຈາກໂຄງການ ໄດ້ຮຽກຮ້ອງໃຫ້ມີການສ້າງແຜນງານ ຫຼຸດຜ່ອນຜົນກະທົບຢ່າງລັງມັດລະວັງ.*** ນີ້ແມ່ນອີກບັນຫາໜຶ່ງ ທີ່ສຳຄັນ ທີ່ຈະຕ້ອງໄດ້ຮັບການເອົາໃຈໃສ່ເພີ່ມເຕີມ ຢ່າງຮີບດວ່ນ. ປະຊາຊົນ ທີ່ອາໃສຢູ່ເຂດກ້ອງເຂື່ອນຈຳນວນຫຼາຍ ຈະໄດ້ຮັບຜົນກະທົບ. ການປ່ຽນແປງຂອງ ລະດັບນ້ຳ ແລະ ການລົບກວນການໄຫຼຂອງນ້ຳ ຈະສົ່ງຜົນກະທົບຕໍ່ ຈຳນວນປາ, ນ້ຳໃຊ້ເພື່ອປູກຜັກ ແລະ ໄຮນາ ແລະ ລວມເຖິງກິດຈະກຳຊີວິດການເປັນຢູ່ໂດຍພື້ນຖານ. ໂຄງການເຂດກ້ອງເຂື່ອນ ລວມເຖິງ ແຜນງານສຳລັບເຂດ ກ້ອງເຂື່ອນຊຶ່ງກວມເອົາ: (i) ການສະໜອງສິ່ງກໍ່ສ້າງພື້ນຖານໂຄງລ່າງ; (ii) ການຟື້ນຟູຊີວິດການເປັນຢູ່; (iii) ການຕິດຕາມການຫາປາ, ແລະ ລາຍລະອຽດເພີ່ມເຕີມ ໄດ້ບັນທຶກໄວ້ໃນບົດລາຍງານຄວາມຄືບໜ້າ ຂອງເດືອນ ທັນວາ 2007. ເອກະສານ ກອບແຜນງານເຂດກ້ອງເຂື່ອນ ໄດ້ມີການສ້າງຂຶ້ນ ແລະ ໄດ້ ມີການເຜີຍແຜ່ ນັບຕັ້ງແຕ່ກາງປີ 2004 ເຖິງຕົ້ນປີ 2005 ຢູ່ໃນເຂດໂຄງການ ແລະ ຫຼັງຈາກນັ້ນ ກໍໄດ້ມີການປຶກສາຫາລື ຫຼາຍເທື່ອ ກັບທ້ອງຖິ່ນ ກ່ຽວກັບລາຍລະອຽດ ຂອງແຜນງານໃນການຈັດຕັ້ງປະຕິບັດ. ເຖິງຢ່າງໃດກໍຕາມ ຍັງເຫັນວ່າ ບໍລິສັດໄຟຟ້ານ້ຳເທີນ 2 ຍັງມີຄວາມຊັກຊ້າ ໃນການຮັບຮອງເອົາແຜນງານລະອຽດ ໃນການຈັດຕັ້ງປະຕິບັດ. ກອງປະຊຸມ ຂອງລັດຖະບານ ແລະ ບໍລິສັດໄຟຟ້ານ້ຳເທີນ 2 ທີ່ໄດ້ຈັດຂຶ້ນໃນວັນທີ 22 ກຸມພາ 2008 ໄດ້ເປີດໂອກາດໃຫ້ ທຸກໆພາກສ່ວນ ອອກຄຳຄິດຄຳເຫັນ ແລະ ໃຫ້ມີການຕົກລົງເຫັນດີຮ່ວມກັນ ກ່ຽວກັບເຂດຂອງແຜນງານ. ແຜນງານດັ່ງກ່າວ ກຳລັງໄດ້ຮັບການທົບທວນຄືນ ໂດຍລັດຖະບານ, ບໍລິສັດໄຟຟ້ານ້ຳເທີນ 2 ແລະ ສະຖາບັນການເງິນສາກົນ. ຕໍ່ຈາກນີ້ ກໍຈະໄດ້ເລີ່ມຕົ້ນ ໃນການຈັດຕັ້ງປະຕິບັດ ແຜນງານ ໄປຈົນກວ່າຈະໄດ້ຮັບການຮັບຮອງ ໂດຍລັດຖະບານ ແລະ ສະຖາບັນການເງິນສາກົນ ພາຍໃນວັນທີ 31 ເດືອນມີນາ 2008 ແລະ ຫຼັງຈາກນັ້ນ ກໍຈະມີການເຜີຍແຜ່ ທົ່ວປະເທດຢ່າງກວ້າງຂວາງ ແລະ ຜ່ານກົນໄກການເຜີຍແຜຂໍ້ມູນຂ່າວສານ ຂອງສະຖາບັນການເງິນສາກົນ. ເຖິງຢ່າງໃດກໍຕາມ ກໍຄວນມີຄວາມເຂົ້າໃຈວ່າ ປະຈຸບັນ

ກຳລັງມີຫຼາຍໆວຽກງານທີ່ກຳລັງຈັດຕັ້ງປະຕິບັດຢູ່ ລວມເຖິງ ການທົດລອງ ວຽກງານປັບປຸງຊີວິດການເປັນຢູ່ ແລະ ການສະໜອງການບໍລິການຂັ້ນພື້ນຖານຕ່າງໆ ແລະ ທີ່ສຳຄັນໄປກວ່ານັ້ນ ແມ່ນການນຳເອົາບົດຮຽນທີ່ໄດ້ ຈາກປະສົບການດັ່ງກ່າວ ເຂົ້າໃນການຈັດຕັ້ງປະຕິບັດ ກິດຈະກຳ ກ່ອນຈະຮອດມື້ເລີ່ມຕົ້ນ ທຳການຜະລິດ ທາງທຸລະກິດ ແລະ ໃນຕໍ່ໜ້າ. ການຍັງມຍາມໂຄງການ ຂອງສະຖາບັນການເງິນສາກົນ ກຳລັງໄດ້ຮັບການສົ່ງເສີມໃຫ້ເຂັ້ມແຂງ ເຖິງແມ່ນວ່າທີ່ຜ່ານມາ ລັດຖະບານ ແລະ ບໍລິສັດໄຟຟ້ານ້ຳເທີນ 2 ໄດ້ປະສົບບັນຫາຫຼາຍຢ່າງ ໃນການປະຕິບັດຕາມແຜນງານທີ່ໄດ້ວາງອອກ.

20. ***ແຜນງານສຸກເສີນໃນການສະໜອງທາດໂປຕີນ ກຳລັງໄດ້ມີການຈັດຕັ້ງປະຕິບັດ ໃນຈຳນວນ 37 ບ້ານ ຕາມນ້ຳເທີນ ແລະ ເຂດກ້ອງເຂື່ອນນາກາຍ.*** ບ້ານດັ່ງກ່າວ ຈະໄດ້ຮັບຜົນກະທົບຈາກການຫຼຸດລົງ ຂອງປາ ຍ້ອນການຫຼຸດລົງ ຂອງນ້ຳທີ່ໄຫຼລົງໃສ່ນ້ຳເທີນ ຫຼັງຈາກໄດ້ມີການປິດປະຕູທໍ່ອວຍແລວນ້ຳນາກາຍ ຕາມກຳນົດ ທີ່ຈະມີຂຶ້ນໃນວັນທີ 10 ເມສາ 2008. ແຜນງານສຸກເສີນ ໃນການສະໜອງທາດໂປຕີນ ຈະສາມາດ ແກ້ໄຂ ບັນຫາກ່ຽວກັບການໄດ້ຮັບສານອາຫານບໍ່ພຽງພໍ ຍ້ອນການຫຼຸດລົງຂອງປາ. ນີ້ຈະແມ່ນມາດຕະການໄລຍະສັ້ນ ໃນຂະນະທີ່ ມາດຕະການໄລຍະຍາວ ກຳລັງມີການສ້າງຂຶ້ນ. ບັນຫານີ້ ກໍແມ່ນອີກບັນຫາໜຶ່ງທີ່ ການຍັງມຍາມໂຄງການ ຂອງສະຖາບັນການເງິນສາກົນ ຈະຕ້ອງໄດ້ຮັບການສົ່ງເສີມໃຫ້ເຂັ້ມແຂງ.

21. ***ກ່ຽວກັບບັນຫາການປັບປຸງຊີວິດການເປັນຢູ່, ເຖິງແມ່ນວ່າບົດຮຽນທີ່ໄດ້ຮັບຈາກບ້ານທົດລອງ ແມ່ນເປັນການສົ່ງເສີມກໍຕາມ, ຄວາມທ້າທາຍ ໃນການເລັ່ງໃຫ້ສຳເລັດ ຍັງຄົງເປັນບັນຫາທີ່ສຳຄັນ.*** ບົດຮຽນທີ່ສຳຄັນ ຈາກການຈັດຕັ້ງປະຕິບັດໂຄງການປັບປຸງຊີວິດການເປັນຢູ່ ໃນ 20 ບ້ານທົດລອງ ໄດ້ປະກົດໃຫ້ເຫັນ ໃນບົດລາຍງານຄວາມຄືບໜ້າ ຂອງເດືອນ ທັນວາ 2007. ແຜນງານດັ່ງກ່າວ ໄດ້ມີການສຶກສາເພີ່ມເຕີມ ໃນກອງປະຊຸມ ທີ່ເມືອງທ່າແຂກ ໃນເດືອນກຸມພາ ໂດຍສະເພາະກ່ຽວກັບ ການອອກແບບ ແລະ ການແບ່ງປັນຄວາມສ່ຽງຕ່າງໆ ທີ່ກ່ຽວຂ້ອງກັບການເງິນຂະໜາດນ້ອຍ. ບົດຮຽນທີ່ສຳຄັນດັ່ງກ່າວນີ້ ຈະໄດ້ຮັບການເອົາເຂົ້າ ໃນໄລຍະທີ່ມີການເລັ່ງວຽກງານ ເພື່ອໃຫ້ສາມາດ ກວມເອົາບ້ານທີ່ຍັງເຫຼືອ ໂດຍໃຫ້ມີການປັບຕົວ ຢ່າງເໝາະສົມ ແລະ ມາດຕະການແບບມີສ່ວນຮ່ວມ ທີ່ຈະໄດ້ເອົາເຂົ້າໃນແຜນງານຈັດຕັ້ງປະຕິບັດ.

**ອ່າງໂຕ່ງ**

22. ***ອົງການປົກປັກຮັກສາ ແລະ ຄຸ້ມຄອງອ່າງໂຕ່ງ ໄດ້ສືບຕໍ່ມີຄວາມຄືບໜ້າ ທີ່ເຫັນໄດ້ຢ່າງຈະແຈ້ງ, ແຕ່ກໍຍັງຮຽກຮ້ອງໃຫ້ມີການເສີມສ້າງຄວາມເຂັ້ມແຂງພາຍໃນ.*** ທີມງານຊ່ຽວຊານດ້ານສິ່ງແວດລ້ອມ ແລະ ສັງຄົມ ແລະ ອົງການ ຕິດຕາມເອກະລາດ ຂອງ ອົງການປົກປັກຮັກສາ ແລະ ຄຸ້ມຄອງອ່າງໂຕ່ງ ໄດ້ແນະນຳໃຫ້ ມີການຈັດຕັ້ງໂຄງຮ່າງການບໍລິຫານຄືນໃໝ່ ແລະໃຫ້ມີການຮັບເອົາພະນັກງານເພີ່ມ ເພື່ອສ້າງຄວາມເຂັ້ມແຂງ ໃນການປະຕິບັດວຽກງານເພີ່ມເຕີມ ໃນວຽກງານຕິດຕາມ ແລະ ປະຕິບັດມາດຕະການ ຊຶ່ງໄດ້ຮັບການຄວບຄຸມ

ໂດຍລັດຖະບານ. ອີກບັນຫາໜຶ່ງທີ່ຕ້ອງໄດ້ຮັບການເອົາໃຈໃສ່ ຢ່າງໃກ້ຊິດ ກໍຄືສາຍພົວພັນ ລະຫວ່າງການອະນຸລັກຮັກສາເຂດປ່າສະຫງວນ ແລະ ການພັດທະນາປະຊາຊົນ ທີ່ອາໃສຢູ່ເຂດດັ່ງກ່າວ. ມັນຮຽກຮ້ອງຕ້ອງການໃຫ້ ອົງການປົກປັກຮັກສາ ແລະ ຄຸ້ມຄອງອ່າງໂຕ່ງ ສ້າງແຜນຍຸດທະສາດທີ່ຈະແຈ້ງ ເພື່ອເນັ້ນໜັກວ່າຍຸດທະສາດດັ່ງກ່າວ ຈະສາມາດຄຸ້ມຄອງການອານຸລັກ ເຂດປ່າສະຫງວນ ໄປພ້ອມໆກັບການປັບປຸງຊີວິດຂອງປະຊາຊົນ. ອີກບັນໜຶ່ງ ທີ່ກ່ຽວພັນກັບການຂຸດຄົ້ນຄຳ ຂະໜາດນ້ອຍໃນເຂດປ່າສະຫງວນ ຊຶ່ງເຫັນວ່າເປັນໄພອັນຮ້າຍແຮງ ທີ່ສົ່ງຜົນກະທົບຕໍ່ຊື່ສຽງຂອງອົງການດັ່ງກ່າວ ແມ່ນໄດ້ຮັບການແກ້ໄຂຈາກລັດຖະບານແລ້ວ.

## ການກະກຽມການຄຸ້ມຄອງ ແລະ ຕິດຕາມ

23. ***ຄວາມສາມາດ ໃນການລົງຍ້ຽມຍາມໂຄງການ ຂອງສະຖາບັນການເງິນສາກົນ ໄດ້ຮັບການເສີມສ້າງໃຫ້ເຂັ້ມແຂງ ກວ່າເກົ່າ ເພື່ອຮັບປະກັນວ່າສະຖາບັດດັ່ງກ່າວ ຈະສາມາດປະຕິບັດຕາມມາດຕະຖານການປ້ອງກັນ ໃນລະດັບໂຄງການໄດ້.*** ນອກຈາກຊ່ຽວຊານຂອງທະນາຄານໂລກ ທີ່ວຽງຈັນແລ້ວ, ກໍມີ ນັກຊ່ຽວຊານດ້ານການຍົກຍ້າຍຈັດສັນ ແລະ ຊ່ຽວຊານດ້ານການພັດທະນາຊົນນະບົດ. ບາງຄົນກໍຄາດວ່າອາດຈະໄດ້ໄປປະຈຳຢູ່ໂຄງການ ຕາມໄລຍະເວລາທີ່ຕ້ອງຈຳເປັນ ໃນການແກ້ໄຂບັນຫາ. ຫົວໜ້າຄຸ້ມຄອງໂຄງການສິ່ງແວດລ້ອມ ແລະ ສັງຄົມ ນ້ຳເທີນ 2 (NTSEP) ໄດ້ຮັບການແຕ່ງຕັ້ງແລ້ວໂດຍໄດ້ແຕ່ງຕັ້ງພະນັກງານ ທີ່ປະຈຳຢູ່ຫ້ອງການທະນາຄານໂລກ ທີ່ນະຄອນຫລວງວຽງຈັນ ເປັນຫົວໜ້າໂຄງການດັ່ງກ່າວ. ນອກນັ້ນ ຢູ່ທີ່ຫ້ອງການຂອງທະນາຄານໂລກ ທີ່ຄອນຫລວງວຽງຈັນ ກໍມີຊ່ຽວຊານຫຼາຍຂະແໜງການເພີ່ມເຕີມ ລວມເຖິງ ຊ່ຽວຊານດ້ານພັດທະນາສັງຄົມ, ສາທາ, ສິ່ງແວດລ້ອມ, ຂໍ້ມູນຂ່າວສານ, ນ້ຳ ແລະ ປາ, ແລະ ພ້ອມກັນນັ້ນກໍມີພະນັກງານວິຊາການ ປະຈຳບາງກອກທີ່ເຮັດວຽກກ່ຽວກັບດ້ານປ່າໄມ້, ສິ່ງແວດລ້ອມ ແລະ ການຄຸ້ມຄອງການເງິນລັດ. ນອກຈາກນັ້ນ ທະນາຄານໂລກ ແລະ ທະນາຄານພັດທະນາອາຊີ ຍັງມີພະນັກງານຊ່ຽວຊານ ທີ່ປະຈຳຢູ່ ວໍຊິງຕັນ ດີຊີ ແລະ ມານີລາ ທີ່ມີປະສົບການ ໃນທຸກໆດ້ານ ຂອງໂຄງການ ຊຶ່ງໄດ້ເດີນທາງ ມາຕິດຕາມໂຄງການຢູ່ເປັນປະຈຳ.

24. ***ການກະກຽມ ການເພີ່ມທະວີການຕິດຕາມ ຂອງໂຄງການໄຟຟ້ານ້ຳເທີນ 2 ກໍເພື່ອເປັນການຕອບສະໜອງຕາມຈຸດປະສົງ ໃນການກຳນົດ ແລະ ຄວບຄຸມຄວາມສ່ຽງຕ່າງໆໃຫ້ໄດ້ດີ..*** ແຜນງານການຕິດຕາມໂຄງການໄຟຟ້ານ້ຳເທີນ 2 ແມ່ນມີຢູ່ຫຼາຍຂັ້ນ ລວມເຖິງ ທີມງານທີ່ປຶກສາສາກົນ (IAG ທີ່ລາຍງານໃຫ້ແກ່ປະທານທະນາຄານໂລກ) ແລະ ທີມງານຊ່ຽວຊານດ້ານສິ່ງແວດລ້ອມ ແລະ ສັງຄົມ (POE ທີ່ລາຍງານໃຫ້ແກ່ລັດຖະບານ). ທີມງານທັງສອງ ໄດ້ມີການລົງຍ້ຽມຍາມໂຄງການເປັນປະຈຳ ແລະ ທັງສອງທີມງານກໍໄດ້ລົງຕິດຕາມໂຄງການໃນເດືອນ ກຸມພາ 2008 (ໂດຍການຕິດຕາມໂຄງການຢ່າງ

ເປັນເອກະລາດ ຂອງໃຜມັນ). ໃນຕອນທ້າຍຂອງການຢ້ຽມຢາມ, ທີມງານທັງສອງ ໄດ້ລາຍງານໃຫ້ລັດຖະບານ, ບໍລິສັດໄຟຟ້ານ້ຳເທີນ2, ສະຖາບັນການເງິນສາກົນ ແລະ ສາທາລະນະຊົນໄດ້ຮັບຟັງ. ລັດຖະບານ ແລະ ບໍລິສັດໄຟຟ້ານ້ຳເທີນ2 ໄດ້ສືບຕໍ່ປຶກສາຫາລື ກັບ ທີມງານຊ່ຽວຊານດ້ານສິ່ງແວດລ້ອມ ແລະ ສັງຄົມ ກ່ຽວກັບບົດລາຍງານ ຂອງເຂົາ ແລະ ບົດລາຍງານສະບັບທາງການ ຂອງທັງສອງທີມງານ ກ່ຽວກັບການຢ້ຽມຢາມດັ່ງກ່າວ ກຳລັງມີການຈັດຕຽມຢູ່. ນັກວິສະວະກອນຂອງຜູ້ໃຫ້ກູ້ທຶນ, ຄະນະກຳມະການທົບທວນຄວາມປອດໄພຂອງເຂື່ອນ, ນັກວິສະວະກອນຂອງລັດຖະບານລາວ ແລະ ອົງການຕິດຕາມກວດກາເອກະລາດ ກຳລັງສືບຕໍ່ ໃນການລົງຢ້ຽມຢາມ, ເຮັດບົດລາຍງານ ແລະ ໃຫ້ຄຳຄິດເຫັນ ກ່ຽວກັບການຈັດຕັ້ງປະຕິບັດໂຄງການ.

**ສະຫຼຸບ**

ບໍລິສັດໄຟຟ້ານ້ຳເທີນ2 ແລະ ລັດຖະບານ ມີຄວາມຄືບໜ້າຫຼາຍຢ່າງ ໃນການຈັດຕັ້ງປະຕິບັດໂຄງການ ຕາມຄາດໝາຍທີ່ໄດ້ວາງອອກ ໄດ້ຢ່າງເພິ່ງພໍໃຈ ກອ່ນທີ່ຈະມີການກັກນ້ຳໃນອ່າງເກັບນ້ຳ ແລະ ວິທີການດ້ານສິ່ງແວດລ້ອມ ແລະ ສັງຄົມ ກໍຕອ້ງເຮັດໃຫ້ສຳເລັດ ໃນແຕ່ລະໄລຍະ ກ່ອນຈະຮອດມື້ເລີ່ມຕົ້ນ ການຜະລິດທາງທຸລະກິດ. ໂດຍການປຶກສາຫາລືກັບ ທີມງານຊ່ຽວຊານດ້ານສິ່ງແວດລ້ອມ ແລະ ສັງຄົມ, ປະຈຸບັນ ລັດຖະບານ ແລະ ບໍລິສັດໄຟຟ້ານ້ຳເທີນ 2 ກຳລັງສັງລວມ ແຜນປະຕິບັດງານຄວາມພ້ອມ ໃນການກັກນ້ຳເຂົ້າອ່າງ ທີ່ຈະກວມເອົາທຸກໆຂະແໜງວຽກງານ. ສະຖາບັນການເງິນສາກົນ ຈະຕິດຕາມ ການຈັດຕັ້ງປະຕິບັດແຜນງານດັ່ງກ່າວ ໂດຍການເຮັດວຽກຢ່າງໃກ້ຊິດ ກັບລັດຖະບານ ແລະ ບໍລິສັດໄຟຟ້ານ້ຳເທີນ2. ແຜນງານດັ່ງກ່າວກໍຈະເຜີຍແຜ່ ໃຫ້ສາທາລະນະຊົນ. ຄວາມຄືບໜ້າ ຂອງແຜນງານດັ່ງກ່າວ ບໍ່ພຽງແຕ່ຈະໄດ້ຮັບການຕິດຕາມໂດຍ ສະຖາບັນການເງິນສາກົນ ເທົ່ານັ້ນ, ແຕ່ຍັງຈະໄດ້ຮັບການຕິດຕາມຈາກ ອົງການຕິດຕາມອື່ນໆ ລວມເຖິງ ທີມງານຊ່ຽວຊານດ້ານສິ່ງແວດລ້ອມ ແລະ ສັງຄົມ. ສິ່ງທ້າທາຍໃນການຈັດຕັ້ງປະຕິບັດ ຕາມຄຳແນະນຳທີ່ຫຼາກຫຼາຍ ກ່ຽວກັບໂຄງການໄຟຟ້ານ້ຳເທີນ 2 ເປັນສິ່ງທີ່ຍາກຫຼາຍ ໂດຍສະເພາະແມ່ນອີງຕາມສະພາບສິ່ງແວດລ້ອມທີ່ ຍັງຂາດເຂີນຄວາມອາດສາມາດ. ເຖິງຢ່າງໃດກໍຕາມ, ພາກສ່ວນທີ່ສຳຄັນຕ່າງໆ ທີ່ກ່ຽວຂ້ອງ ໂດຍສະເພາະ ແມ່ນລັດຖະບານ ແລະ ບໍລິສັດໄຟຟ້ານ້ຳເທີນ 2 ຍັງຄົງຍຶດໝັ້ນໃນການຈັດຕັ້ງປະຕິບັດໂຄງການດັ່ງກ່າວໃຫ້ໄດ້ຮັບຜົນສຳເລັດ.